# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 24 ມັງກະຣາ 2021 (01-24-2021)

## ຜົນປະໂຫຍດຂອງວິນັຍຝ່າຍວິນຍານ

*ມີນິສັຍຫຍັງແດ່ທີ່ທ່ານສັງເກດເຫັນໃນຄົນອື່ນທັງດ້ານດີແລະບໍ່ດີ?*

**ຈຸດສຳຄັນໃນບົດຮຽນ:** ການເຕີບໃຫຍ່ໃນພຣະຄຣິດເກີດຂຶ້ນເມື່ອເຮົາປະຕິບັດວິນັຍຝ່າຍວິນຍານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ພວກເຮົາມີນິສັຍດີຫຼາຍຢ່າງ, ບາງທີອາດມີນິສັຍບໍ່ດີບາງແນວ, ແລະບາງທີມີນິສັຍຜິດປົກກະຕິບາງຢ່າງ. ຕົວຢ່າງ, ພວກເຮົາບາງຄົນ...ນອນເອົາຜ້າຫົ່ມປົກຢ່າງແໜ້ນຍາມກາງຄືນ, ນິສັຍເຮົາເລີ່ມແຕ່ຍັງນ້ອຍເພື່ອປ້ອງກັນຕົວຈາກຜີຮ້າຍທີ່ລີ້ຢູ່ໃຕ້ຕຽງ...ເວົ້າວ່າ "ວັນ-ພຸດ" ອອກສຽງຕາມຄຳສັບ ເວລາເຮົາຕ້ອງການຂຽນອອກມາ...ຕົບຖົງຄ່ອຍໆເພື່ອແນ່ໃຈວ່າກະເປົາ, ລູກກະແຈ, ແລະໂທຣະສັບຢູ່ຄົບ-ເຖິງແມ່ນວ່າເຮົາຫາກໍ່ເອົາມັນໃສ່ມື້ກີ້ນີ້ເອງ. ນັກຂຽນທ່ານໂວນແຕຣ໌ດື່ມກາເຟ 40-50 ຈອກຕໍ່ມື້ ! ແນວນີ້ ຄ້າຍກັບວ່າເປັນນິສັຍບໍ່ດີ, ແຕ່ທ່ານໂວນແຕຣ໌ມີອາຍຸຍືນຮອດແປດສິບສາມປີ. ນັກສິລປະກັມ Michelangilo ນຸ່ງຊຸດເກົ່ານອນຕອນເລີກວຽກແລະບໍ່ໄດ້ອາບນ້ຳ. ອີກນິສັຍນຶ່ງ, ມັນເບິ່ງເໝືອນວ່າບໍ່ຖືກຫຼັກອະນາມັຍ, ແຕ່ໄມໂກແອນຈິໂລມີອາຍຸຍືນຮອດແປດສິບເກົ້າປີ. ພວກເຮົາອາດຖົກຖຽງຄວາມພົວພັນຣະຫວ່າງດີຫຼືຊົ່ວໃນນິສັຍບາງຢ່າງ, ແຕ່ມີບາງສິ່ງທີ່ເຮົາເຮັດໄດ້ຊຶ່ງເປັນການດີຕໍ່ເຮົາແນ່ນອນ. ສິ່ງທີ່ເຮົາເຮັດຊ່ອຍໃຫ້ເຮົາເຕີບໃຫຍ່ໃນການຢ່າງຕາມພຣະຄຣິດແມ່ນສິ່ງທີ່ດີແນ່ນອນ, ແລະພວກເຮົາຢາກເຮັດໃຫ້ດີເພື່ອຮັກສາວິນັຍຕໍ່ຕົວເຮົາເອງ <u>ຢາກເຮັດເປັນປະຈຳ ແລະ ຢາກເຮັດດ້ວຍຄວາມສັດຊື່.</u>

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2, ແລະ 3, )

## ການສຶກສາພຣະຄັມພີ

**1. <u>1ຕີໂມທຽວ 4:1-3</u>.**

*[1]ພຣະວິນຍານຊົງກ່າວໄວ້ໂດຍແຈ່ມແຈ້ງວ່າ ໃນຄາວພາຍໜ້າຈະມີລາງຄົນປະຖິ້ມຄວາມເຊື່ອໂດຍຫັນໄປຟັງນິຍາຍທີ່ລໍ້ລວງ ແລະຟັງຄຳສອນຂອງພວກຜີຮ້າຍ [2]ຊຶ່ງມາຈາກການໜ້າຊື່ໃຈຄົດຂອງຄົນທີ່ກ່າວຕົວະຄືຄົນທີ່ໃຈສຳນຶກຜິດແລະຊອບຂອງເຂົາຖືກໝາຍໄວ້ເໝືອນກັບຮອຍເຫຼັກແດງ. [3]ເຂົາຫ້າມບໍ່ໃຫ້ເອົາກັນເປັນຜົວເມັຍ, ຫ້າມບໍຣິໂພກອາຫານບາງຊນິດຊຶ່ງພຣະເຈົ້າໄດ້ຊົງສ້າງໄວ້ໃຫ້ຜູ້ທີ່ເຊື່ອ ແລະ ຮູ້ຈັກຄວາມຈິງນັ້ນໄດ້ຮັບບໍຣິໂພກດ້ວຍຂອບພຣະຄຸນ.*

ພຣະເຈົ້າໄດ້ຊົງປະທານສິ່ງດີຫຼາຍຢ່າງແກ່ເຮົາ, ແຕ່ໂລກຫາທາງບິດເບືອນຄວາມຈິງນີ້. ທ່ານໂປໂລກ່າວວ່າສິ່ງນີ້ອາດເກີດຂຶ້ນ, ແລະເພິ່ນໝາຍເຖິງສະເພາະ "ພາຍໜ້າ." ທ່ານໂປໂລກ່າວເຖິງສິ່ງນີ້ອີກໃນຈົດໝາຍຫາຕີໂມທຽວສບັບທີ 2 ຂອງເພິ່ນ, ແລະເພິ່ນອ້າງເຖິງ "ຄາວສຸດທ້າຍ" (2 ຕມທ 3:1). ສຳນວນທັງສອງຖືຄວາມໝາຍດຽວກັນ-ວັນພຣະເຢຊູສເດັດຂຶ້ນສູ່ສວັນ ແລະການສເດັດກັບມາຂອງພຣະອົງ. ເມື່ອວັນສຸດທ້າຍໃກ້ເຂົ້າມາ-ແລະການສະເດັດກັບມາຂອງພຣະອົງກໍໃກ້ຈະເກີດຂຶ້ນ-ໂລກກໍຈະເມົາຢູ່ກັບ "ການຟັງນິຍາຍລໍ້ລວງແລະຟັງຄຳສອນຂອງພວກຜີຮ້າຍ" (ຂໍ້ 1).

ມີຕົວຢ່າງສິ່ງດີຫຍັງແດ່ທີ່ຖືກບິດເບືອນດ້ວຍວັທນາທັມຂອງເຮົາ?

ໜ້າເສົ້າໃຈ, ສິ່ງທີ່ເກີດຂຶ້ນໃນປັດຈຸບັນບໍ່ແມ່ນສິ່ງໃໝ່ ດັ່ງທີ່ທ່ານໂປໂລພົບໃນຍຸກຂອງເພິ່ນ, ພວກເຮົາກໍພົບເຫັນພວກທີ່ "ປະຖິ້ມຄວາມເຊື່ອ," ຫຼາຍຄົນອ້າງຕົນວ່າເປັນຜູ້ຕິດຕາມພຣະເຢຊູ, ແຕ່ ການອ້າງຕົນນັ້ນບໍ່ສາມາດພິສູດວ່າ

ເຂົາມີຊີວິດໃໝ່ໃນພຣະເຢຊູ. ການປະຖິ້ມຫຼັກຄໍາສອນຄຣິສຕຽນແລະຂາດການດໍາເນີນຊີວິດໃນການເຊື່ອຟັງພຣະຄຣິດເປັນຫຼັກຖານວ່າຄົນປະເພດນັ້ນບໍ່ເຄີຍມີຄວາມສັມພັນກັບພຣະເຢຊູເມື່ອເລີ່ມຕົ້ນໃໝ່ (ເບິ່ງໂຢຮັນ 14:23-24).

ຜູ້ທີ່ປະຖິ້ມຄວາມເຊື່ອບໍ່ໄດ້ເສັຽຄວາມພົ້ນຂອງເຂົາ, ເພາະວ່າເຂົາບໍ່ໄດ້ພົ້ນເມື່ອເລີ່ມຕົ້ນ. ພວກເຂົາຖືກຊັກຈູງໃຫ້ຫຼົງທາງໂດຍຄົນ "ຂີ້ຕົວະຊຶ່ງໃຈສໍານຶກຜິດແລະຊອບຂອງເຂົາຖືກໝາຍໄວ້ດ້ວຍຮອຍເຫຼັກແດງ," ຄືຜູ້ທີ່ສອນຄວາມເຊື່ອທີ່ຜິດ. ຄົນເຫຼົ່ານີ້ເປັນຄົນໜ້າຊື່ໃຈຄົດຫຼອກລວງຢ່າງໜ້າດ້ານ. ໃນກົນອຸບາຍຂອງເຂົາ, ເຂົາຊອກຫາທາງບິດເບືອນຄວາມຈິງຂອງພຣະເຈົ້າ. ທ່ານໂປໂລຍົກສອງຕົວຢ່າງ:

1. **ການແຕ່ງງານ.** ຄົນຫຼອກລວງພວກນີ້, ທ່ານໂປໂລຂຽນໄວ້ວ່າ, ເຂົາ "ສັ່ງຫ້າມການແຕ່ງງານ." ຂນະທີ່ອັຄສາວົກຂຽນຈົດໝາຍຫາຕີໂມທຽວ, ສິດຍາພິບານຂອງຄຣິສຕະຈັກເອເຟໂຊ, ຄຣິສຕະຈັກຖືກຕໍ່ຕ້ານຈາກພວກທີ່ທໍຣະມານຕົວເອງສັ່ງຫ້າມບໍ່ໃຫ້ເອົາກັນເປັນຜົວເມັຍ. ພັນທະສັນຍາກ່ຽວກັບການແຕ່ງງານແມ່ນຂອງປະທານທີ່ດີຈາກພຣະເຈົ້າ, ແລະໄພ່ພົນຂອງພຣະເຈົ້າຄວນສເລີມສລອງ. ພຣະເຢຊູເອງກໍໄດ້ຮັບຮອງການແຕ່ງງານ: ການເຂົ້າຮ່ວມແອກຂອງຊາຍຄົນນຶ່ງກັບຍິງຄົນນຶ່ງ ແມ່ນການຜູກພັນຕລອດຊີວິດ (ມັດທາຍ 19:4-8); ຈິງແທ້, ການທໍາພິທີສາທາຣະນະແມ່ນການແຕ່ງງານ (ໂຢຮັນ 2:1-11). ເວລາທ່ານໂປໂລປະຊ່ອງຫວ່າງໃຫ້ພວກທີ່ເລືອກບໍ່ແຕ່ງງານເພື່ອເຂົາຈະມີອິສຣະພາບເຂົ້າໃນວຽກງານຂອງພຣະເຈົ້າຢ່າງເຕັມສ່ວນ, ເພິ່ນບໍ່ໄດ້ສັ່ງຫ້າມການແຕ່ງງານ; ແທນທີ່ຈະຫ້າມເພິ່ນກັບສນັບສນູນໃຫ້ຄົນທຸກປະເພດສແວງຫານໍ້າພຣະທັຍພຣະເຈົ້າໃນການສົມຣົດຂອງເຂົາ (1 ກຣທ 7:8-16).

2. **ອາຫານ.** ພວກຄົນຫຼອກລວງ ອອກຄໍາສັ່ງຫ້າມຮັບປະທານອາຫານບາງຊນິດເໝືອນກັນ-ອາຫານຊຶ່ງ "ພຣະເຈົ້າໄດ້ສ້າງ" ໄວ້ໃຫ້ເຂົາກິນ. ໃນສວນເອເດັນ, ພຣະເຈົ້າອະນຸຍາດໃຫ້ອາດາມແລະເອວາກິນໝາກໄມ້ "ຈາກຕົ້ນໄມ້ທຸກຕົ້ນໃນສວນ" ຍົກເວັ້ນ "ຕົ້ນໄມ້ແຫ່ງຄວາມດີແລະຄວາມຊົ່ວ" (ປຖກ 2:16-17). ໃນເມື່ອພຣະບັນຍັດໃນພຣະຄັມພີເດີມຫ້າມບໍ່ໃຫ້ລູກຫຼານຄົນອິສຣາເອນກິນຊີ້ນສັດບາງຊນິດ (ພບຍ2 14:3-21), ພຣະເຈົ້າໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ມາວ່າທ່ານເປໂຕສາມາດກິນອາຫານທຸກຊນິດ "ທີ່ພຣະເຈົ້າສ້າງຊໍາຣະສະອາດແລ້ວ" (ກຈກ 10:15).

ຊີວິດຂອງເຮົາຄວນຕັ້ງຢູ່ເທິງຄວາມສັມພັນກັບພຣະຄຣິດ, ແຕ່ດ້ວຍການວາງກົດຣະບຽບວ່າເຮົາຈະຖືຮັກສາແລະພໍໃຈຄວາມສັມພັນນັ້ນຢ່າງໃດ, ກໍກາຍເປັນການຖືກຊັກຈູງໄປໃນທາງຜິດ. ເຊັ່ນ ກົດຫ້າມຕົນເອງກໍເປັນການບິດເບືອນຄວາມເຂົ້າໃຈພຣະເຈົ້າຂອງເຮົາ, ຄວາມກະຕັນຍູຂອງເຮົາຕໍ່ພຣະອົງ, ແລະ ການເດີນຂອງເຮົາກັບພຣະອົງ.

## 2. <u>1 ຕີໂມທຽວ 4:4-7ກ</u>.

*[4]ດ້ວຍວ່າສິ່ງສາຣະພັດທີ່ພຣະເຈົ້າໄດ້ຊົງສ້າງໄວ້ນັ້ນເປັນຂອງດີ ບໍ່ມີສິ່ງໃດທີ່ຄວນປະຖິ້ມຈັກສິ່ງ ແຕ່ຄວນຮັບເອົາທຸກສິ່ງດ້ວຍຂອບພຣະຄຸນ. [5]ເພາະວ່າ ສິ່ງເຫຼົ່ານັ້ນກໍຊົງຊໍາຣະໄວ້ແລ້ວໂດຍພຣະທັມຂອງພຣະເຈົ້າແລະຄໍາວອນຂໍ. [6]ຖ້າເຈົ້າຈະໃຫ້ຄໍາແນະນໍາເຫຼົ່ານີ້ແກ່ພວກພີ່ນ້ອງ ເຈົ້າກໍຈະເປັນຜູ້ບົວຣະບັດທີ່ດີຂອງພຣະເຢຊູຄຣິດ ບໍາຣຸງຕົນດ້ວຍຂໍ້ຄວາມເຣື່ອງຄວາມເຊື່ອແລະດ້ວຍຫຼັກຄໍາສອນອັນດີທີ່ເຈົ້າຂັບຕາມນັ້ນ. [7ກ]ຈົ່ງເວັ້ນໜີຈາກນິຍາຍປະໂລມໂລກທີ່ພວກຜູ້ຍິງເຖົ້າເຄີຍເລົ່າໃຫ້ຟັງນັ້ນ...*

ແທນທີ່ຈະປະຕິເສດສິ່ງດີທີ່ພຣະເຈົ້າປະທານແກ່ເຮົາ, ພວກເຮົາສົມຄວນຮັບເອົາແລະຂອບພຣະຄຸນຂອງປະທານທີ່ດີ. ສິ່ງພຣະເຈົ້າສ້າງລ້ວນແຕ່ເປັນສິ່ງດີ. ໃນວັນທີ່ຫົກ, ເມື່ອ "ພຣະເຈົ້າຊົງທອດພຣະເນດເຫັນສິ່ງເນຣະມິດສ້າງ," ພຣະອົງຕຣັດວ່າ "ດີຫຼາຍ" (ປຖກ 1:31). ບໍ່ມີຂໍ້ຍົກເວັ້ນ, ພຣະອົງບໍ່ມີຄວາມຜິດພາດ. ບໍ່ມີສິ່ງຜິດພາດ. ໂດຍລວມແລະໂດຍລາຍລະອຽດ, ດີຫຼາຍ.

ພວກເຮົາສົມຄວນຮັບເອົາຂອງປະທານທີ່ດີຈາກພຣະເຈົ້າ, ແລະດ້ວຍການຂອບພຣະຄຸນສໍາລັບສິ່ງເຫຼົ່ານັ້ນ. ອາຈານໂປໂລໄດ້ກ່າວໂດຍສະເພາະເຖິງການແຕ່ງງານແລະອາຫານ, ແຕ່ມັນກໍເປັນຈິງກັບສິ່ງຊົງສ້າງທັງໝົດ. ພວກ

ເຮົາຮັບເອົາແລະສະແດງຄວາມໂມທະນາສິ່ງຊົງສ້າງທຸກສິ່ງ, ເພາະວ່າລ້ວນແຕ່ມາຈາກພຣະຫັດພຣະອົງ. ຂອງປະທານສະທ້ອນເຖິງຜູ້ປະທານ. ຂອງປະທານທີ່ພວກເຮົາໄດ້ຮັບຈາກພຣະຫັດພຣະເຈົ້າເປັນສິ່ງບໍຣິສຸດ, ແລະເປັນສິ່ງທີ່ຄວນຮັບເອົາດ້ວຍໃຈຂອບພຣະຄຸນ, ຮັບເອົາດ້ວຍການໄຫວ້ວອນ, ແລະໃຊ້ດ້ວຍຄວາມຮັບຜິດຊອບ.

ໃນເມື່ອຄວາມຈິງແມ່ນ ສິ່ງຊົງສ້າງລ້ວນແຕ່ເປັນສິ່ງດີ, ແລະເປັນຄວາມຈິງວ່າການທາຣຸນສິ່ງທີ່ພຣະເຈົ້າປະທານເປັນຄວາມຊົ່ວ. ການໃຊ້ຕົວຢ່າງມາກ່ອນນີ້, ເວລາເຮົາທາຣຸນທາງເພດ ຫຼື ໃຊ້ອອກນອກການອອກແບບຂອງພຣະເຈົ້າ, ພວກເຮົາກໍມຸ່ງສູ່ການທຳລາຍ. ເຊັ່ນດຽວກັນເມື່ອເຮົາທາຣຸນອາຫານ, ຕົວຢ່າງ, ການໂລພາ, ຈະເປັນອັນຕະຣາຍຕໍ່ເຮົາ. ທ່ານໂປໂລບໍ່ໄດ້ສອນເສຣີພາບທີ່ບໍ່ມີຂອບເຂດ; ເພິ່ນຫັນມາສນັບສນູນຄວາມດີຂອງສິ່ງຊົງສ້າງແທນ.

ທ່ານໂປໂລໄດ້ຊຸກຍູ້ໃຫ້ຕີໂມທຽວສອນສິ່ງທີ່ລາວຂັບຕາມນັ້ນ. ລາວຄວນແກ້ໄຂຄຳສອນປອມຂອງພວກຫູອກລວງດ້ວຍການຫັນຄວາມສົນໃຈຂອງຜູ້ເຊື່ອໃຫ້ຫັນມາໃຊ້ຄວາມຈິງຂອງພຣະເຈົ້າ. ການປະພຶດຂອງເຮົາຕ້ອງຢູ່ໃນທິດທາງຂອງການສອນພຣະທັມທີ່ບໍ່ປ່ຽນແປງຂອງພຣະເຈົ້າ, ບໍ່ໃຊ່ຕາມມາຕຖານທີ່ປ່ຽນໄປປ່ຽນມາຂອງສັງຄົມ.

ໃນເມື່ອເຮົາສຸມໃສ່ຄວາມຈິງຂອງພຣະເຈົ້າ, ພວກເຮົາກໍສາມາດຫຼີກເວັ້ນຈາກນິຍາຍປະໂລມໂລກ "ອັນບໍ່ມີຈຸດແລະໂງ່ນັ້ນ"(ຂໍ້ 7). ນິຍາຍໂງ່, ທ່ານໂປໂລໝາຍເຖິງການຫ້າມບໍ່ໃຫ້ຮັບປະທານອາຫານຫຼືຫ້າມເອົາກັນເປັນຜົວເມັຽ, ຊຶ່ງຫຼັກຄຳສອນໄດ້ຂຍາຍຄວາມຈາກຄຳສອນສອງຢ່າງນັ້ນ. ທາງທີ່ດີທີ່ສຸດ ທີ່ຈະພາໃຫ້ເຮົາຮູ້ດີວ່າອັນໃດເປັນຄຳສອນປອມແມ່ນການຄຸ້ນເຄີຍກັບຂອງແທ້. ເປັນຈິງດັ່ງດຽວກັບການເວັ້ນຈາກນິຍາຍປະໂລມໂລກ. ການຫຼີກເວັ້ນບໍ່ໃຫ້ຕົກເປັນເຫຍື່ອນິຍາຍປະໂລມໂລກທີ່ຄຣູສອນປອມກຳລັງເຜີຍແຜ່ຢູ່, ພວກເຮົາຕ້ອງຮູ້ຈຸດເດັ່ນຂອງຄວາມຈິງ-ແລະຄວາມຈິງພົບໃນພຣະທັມພຣະເຈົ້າ.

| |
|---|
| ມີຄຳສອນຫຍັງແດ່ທີ່ທ່ານໄດ້ຍິນວ່າເປັນພຣະຄັມພີແຕ່ທີ່ຈິງບໍ່ແມ່ນ? |

**3.1 ຕີໂມທຽວ 4:7ຂ-10.**

*[7ຂ] ແຕ່ຈົ່ງຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ [8] ເພາະການຝຶກຫັດທາງກາຍນັ້ນມີປໂຍດຫຼາຍຢ່າງເພາະໄດ້ຮັບພຣະສັນຍາໄວ້ສຳລັບຊີວິດໃນປັດຈຸບັນແລະໃນອະນາຄົດດ້ວຍ. [9] ຂໍ້ຄວາມນີ້ກໍຊັດຈິງແລະສົມຄວນທຸກຄົນຈະໄດ້ຮັບເຊື່ອເອົາໄວ້. [10] ເຫດທີ່ເຮົາເຮັດການໜັກໜ່ວງແລະອົດສາສູ້ ກໍເພາະວ່າເຮົາໄດ້ໄວ້ວາງໃຈໃນພຣະເຈົ້າຜູ້ຊົງພຣະຊົນຢູ່, ຜູ້ຊົງໂຜດໃຫ້ພົ້ນຂອງຄົນທັງປວງ, ເປັນຕົ້ນຂອງພວກຄົນທີ່ເຊື່ອໃນພຣະອົງ.*

ທ່ານອັຄສາວົກໄດ້ແຖມທ້າຍຢ່າງວ່ອງໄວດ້ວຍຄຳສັ່ງທີສອງ: "ແຕ່ຈົ່ງຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ." ຄຳສັ່ງແລກຈະບໍ່ຄົບຖ້ວນຖ້າປາສຈາກຄຳສັ່ງທີສອງ. ເຊັ່ນດຽວກັບການຫຼີກເວັ້ນຈາກການເຮັດຜິດຈະບໍ່ຄົບຖ້ວນຈົນກວ່າເຮົາກະທຳໃນສິ່ງຖືກຕ້ອງ, ການຫຼີກເວັ້ນຈາກນິຍາຍປະໂລມໂລກຈະບໍ່ຄົບຖ້ວນຈົນກວ່າເຮົາຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ.

| |
|---|
| ມີຂໍ້ຫຍຸ້ງຍາກແລະຜົນປໂຍດຫຍັງແດ່ໃນການຝຶກຕົນນັບຖືພຣະເຈົ້າຢ່າງຖືກຕ້ອງ? |

ດັ່ງດຽວກັນກັບການຝຶກຢ່າງເຄັ່ງຄັດ, ຝຶກຊ້ອມຫຼາຍຊົ່ວໂມງ, ແລະການຊ້ອມຢ່າງເຖັ້ມງວດຊ່ວຍໃຫ້ພາກປະຕິບັດການແຂ່ງຂັນກິລາ, ດົນຕຣີ, ແລະ ນັກສະແດງຕົວຈິງດີຂຶ້ນ, ຄວາມຂຍັນວິນັຍຝ່າຍວິນຍານສ້າງຜົນປໂຍດແກ່ຜູ້ຕິດຕາມພຣະຄຣິດໃນປັດຈຸບັນ. ແຖມ, ການມີວິນັຍຝ່າຍວິນຍານຈະນຳຜົນດີແກ່ຜູ້ເຊື່ອໃນອານາຄົດດ້ວຍ. ການຝຶກຫັດທາງກາຍນັ້ນມີປໂຍດແກ່ເຮົາ, ການມີວິນັຍຝ່າຍວິນຍານຍິ່ງສຳຄັນກວ່າເພາະມັນມີຜົນຕໍ່ຊີວິດນິຣັນ.

ດັ່ງນັ້ນຜູ້ເຊື່ອຈຶ່ງຕ້ອງຝຶກຝົນຕົນເອງ. "ພວກເຮົາເຮັດການແລະອົດສາສູ້ ເພາະຄວາມພຍາຍາມມີຄ່າ. ການງານ

ແລະການອົດສາສູ້ບໍ່ໄດ້ແມ່ນກິຈກັມທີ່ງ່າຍ. ຄວາມຈິງ, ສ່ວນຫຼາຍມັກຈະເຄັ່ງຄັດ. ແທນທີ່ຈະຝຶກແບບເຄັ່ງຄັດພວກເຮົາຄວນເອົາທາງທີ່ດີທີ່ສຸດ-ທາງນັບຖືພຣະເຈົ້າຢ່າງຖືກຕ້ອງ.

ທາງນີ່ງທີ່ເຮົາຝຶກຝົນແມ່ນໂດຍການຝຶກຫັດວິນັຍຝ່າຍວິນຍານ, ສິ່ງ "ເລັກນ້ອຍ" ທີ່ຄຣິສຕຽນຕັ້ງໃຈເຮັດຈະເປີດທາງໃຫ້ເຂົາເຂົ້າເຖິງພາຣະກິດຂອງພຣະເຈົ້າແຫ່ງການປັບຕົວໃຫ້ມີຮູບຮ່າງຂອງພຣະຄຣິດ." ການຝຶກວິນັຍຝ່າຍວິນຍານເປັນການກະທຳຢ່າງຕັ້ງອົກຕັ້ງໃຈ.

ເມື່ອເຮົາປະຕິບັດວິນັຍຝ່າຍວິນຍານ, ແມ່ນເຮົາເປີດຊ່ອງທາງໃຫ້ພຣະເຈົ້າສ້າງຄວາມຊອບທັມໃນເຮົາ. ສິ່ງສຳຄັນຄວາມໝັ້ນໃຈຂອງເຮົາບໍ່ໄດ້ຢູ່ທີ່ວິນັຍຝ່າຍວິນຍານ. ຄວາມໝັ້ນໃຈແລະຄວາມຫວັງຂອງເຮົາ ຢູ່ທີ່ພຣະເຈົ້າຜູ້ທຳງານຜ່ານການເຊື່ອຟັງຂອງເຮົາເພື່ອປັບເຮົາໃຫ້ມີລັກສນະພຣະຄຣິດ. ໃນເມື່ອເຮົາບໍ່ສາມາດຜລິດຄວາມຊອບທັມໄດ້ເອງ, ພຣະເຈົ້າຈະໃຊ້ການຝຶກຕົນເພື່ອຜລິດຄວາມຊອບທັມໃນຊີວິດເຮົາ.

| ພວກເຮົາຊ່ອຍກັນຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງຢ່າງໃດ? |
|---|

**ນຳໃຊ້ໃນຊີວິດ**

ທ່ານຈະ "ຝຶກຕົນໃນການນັບຖືພຣະເຈົ້າຢ່າງຖືກຕ້ອງຢ່າງໃດ"? ຈົ່ງເລືອກການນຳໃຊ້ນີ້ງຕໍ່ລົງໄປນີ້:

- **ອຸທິດຕົນ.** ຈົ່ງອຸທິດຕົນ ເຂົ້າຮ່ວມທຸກຕອນຂອງບົດຮຽນການຝຶກວິນັຍຝ່າຍວິນຍານ.
- **ໃຊ້ເວລາ.** ຈົ່ງເພີ່ມວັນລະ 30 ນາທີເຝົ້າດ່ຽວໃນທັກອາທິດຕໍ່ໄປນີ້ ເພື່ອຝຶກວິນັຍຝ່າຍວິນຍານກວມລວມບົດຮຽນນີ້.
- **ສ້າງສາວົກ.** ຈົ່ງສ້າງຄວາມສັມພັນກັບຜູ້ເຊື່ອໃໝ່ຫຼືໜຸ່ມ (ເພດດຽວກັບກັບທ່ານ) ເພື່ອຊ່ອຍຊູໃຫ້ເຂົາເຕີບໃຫຍ່ຂື້ນໃນພຣະຄຣິດ.

ໂອກາດດີທີ່ເພື່ອນບ້ານຮຽນຮູ້ຄວາມຈິງອາດຂຶ້ນກັບຄຸນທັມຂອງເຮົາ. ບາງທີຄົນໃນຊີວິດຂອງທ່ານອາດແອບຮຽນແບບຈາກການນັບຖືພຣະເຈົ້າຂອງທ່ານຢູ່. ຍ້ອນຄວາມຕ້ອງການຮອບຕົວເຮົາແລະໃນເຮົາ, ພວກເຮົາຕ້ອງ "ທຳງານແລະອົດສາສູ້" ເພື່ອຈະໄດ້ຮູບຮ່າງຝ່າຍວິນຍານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**